**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ
ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ການລະບາດຂອງພະຍາດ ໂຄວິດ-19 ເລກທີ: 015 /ສພກ.ນວ

ວັນທີ: 19 ມິຖຸນາ 2021

# ແຈ້ງການ

**ຮຽນ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ຢູ່ນະຄອນຫຼວງວຽງຈັນ

**ເລື່ອງ:** ເງື່ອນໄຂການອະນຸຍາດເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ ແຕ່ວັນທີ 20 ມິຖຸນາ ຫາ 04 ກໍລະກົດ 2021.

- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 671/ຫສນຍ, ລົງວັນທີ 19 ມິຖຸນາ 2021;
- ອີງຕາມ ແຈ້ງການຂອງຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດ COVID-19 ນະຄອນຫຼວງວຽງຈັນ, ສະບັບເລກທີ 014/ສພກ.ນວ, ລົງວັນທີ 19 ມິຖຸນາ 2021.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ນະຄອນຫຼວງວຽງຈັນ ຂໍແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບເງື່ອນໄຂໃນການອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມຈໍາເປັນເດີນທາງເຂົ້າ - ອອກ ນະຄອນຫຼວງວຽງຈັນ ດັ່ງນີ້:

**I.** ການເຂົ້າ-ອອກ ນະຄອນຫຼວງວຽງຈັນ ທີ່ບໍ່ຈໍາເປັນຂໍໜັງສືອະນຸຍາດເດີນທາງ:

1. ຂະບວນລົດຜູ້ນໍາ, ລົດສະຫຼາມ, ລົດສົ່ງຄົນເຈັບ, ລົດກູ້ໄພ, ລົດດັບເພີງ ແລະ ລົດຄະນະສະເພາະກິດ, ລົດຂົນສົ່ງສິນຄ້າ, ຂົນສົ່ງໂຄງການ ແລະ ເຄື່ອງຮັບໃຊ້ການຜະລິດ;
2. ຜູ້ທີ່ໄດ້ຮັບວັກຊີນຄົບ 2 ເຂັມ ແຕ່ຕ້ອງແຈ້ງບັດຢັ້ງຢືນການສັກວັກຊີນ ແລະ ບັດປະຈໍາຕົວ ຫຼື ໜັງສືເດີນທາງ (PASSPORT) ຕໍ່ເຈົ້າໜ້າທີ່ປະຈໍາດ່ານກວດກາທຸກຄັ້ງ;
3. ຜູ້ປິ່ນປົວຫາຍດີ ຈະກັບພູມລໍາເນົາ ໃຫ້ນໍາໃຊ້ໃບຢັ້ງຢືນອອກໂຮງໝໍ ແຈ້ງຕໍ່ເຈົ້າໜ້າທີ່ປະຈໍາດ່ານກວດກາທຸກຄັ້ງ;

**II.** ການເຂົ້າ-ອອກ ນະຄອນຫຼວງວຽງຈັນ ທີ່ຕ້ອງຂໍໜັງສືອະນຸຍາດເດີນທາງ:

1. ນັກການທູດ, ຊ່ຽວຊານ, ວິຊາການ ຈາກອົງການຈັດຕັ້ງສາກົນ: ໃຫ້ມີໃບສະເໜີຈາກສະຖານທູດ ຫຼື ອົງການຂອງຕົນ ເພື່ອຂໍອະນຸຍາດຈາກກະຊວງການຕ່າງປະເທດ ຫຼື ກະຊວງສາທາລະນະສຸກ ຫຼື ຄະນະສະເພາະກິດ ຂັ້ນສູນກາງ;
2. ພະນັກງານຂອງລັດ ຂັ້ນສູນກາງ ແລະ ກໍາລັງ ປກຊ-ປກສ ໃຫ້ຂໍອະນຸຍາດຈາກການຈັດຕັ້ງຂອງຕົນ;
3. ພະນັກງານລັດຂັ້ນທ້ອງຖິ່ນ, ພະນັກງານວິສາຫະກິດ ໃຫ້ມີໃບສະເໜີຈາກພາກສ່ວນຕົນ ຫາພະແນກສາທາລະນະສຸກ ຫຼື ຄະນະສະເພາະກິດ ນະຄອນຫຼວງວຽງຈັນ;

4. ນັກບວດ: ໃຫ້ມີໃບສະເໜີຈາກວັດ, ໂບດ ຫຼື ອົງການປົກຄອງບ້ານຂອງຕົນ ຫາພະແນກສາທາລະນະສຸກ ຫຼື ຄະນະສະເພາະກິດ ນະຄອນຫຼວງວຽງຈັນ;
5. ປະຊາຊົນລາວ, ຄົນຕ່າງດ້າວ ແລະ ຊາວຕ່າງປະເທດ: ໃຫ້ມີໃບສະເໜີຂອງຕົນໂດຍຜ່ານອົງການປົກຄອງບ້ານ ຫາພະແນກສາທາລະນະສຸກ ຫຼື ຄະນະສະເພາະກິດ ນະຄອນຫຼວງວຽງຈັນ;

**III. ບຸກຄົນທີ່ບໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກ ນະຄອນຫຼວງວຽງຈັນ**

ຜູ້ທີ່ຢູ່ເຂດບ້ານແດງ, ຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອ, ຜູ້ຖືກຈໍາກັດບໍລິເວນ ແລະ ຜູ້ທີ່ປິ່ນປົວຫາຍດີຈາກພະຍາດ COVID-19 ທີ່ຈໍາກັດບໍລິເວນບໍ່ຄົບ 14 ມື້.

**IV. ການປະກອບເອກະສານ.**

1. ໃບສະເໜີ ຂໍອະນຸຍາດໃຫ້ມີຂໍ້ມູນຈະແຈ້ງ: ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ທີ່ຢູ່ປະຈຸບັນ (ບ້ານ, ເມືອງ, ແຂວງ) ຫຼື ບ່ອນເຮັດວຽກ, ຈຸດປະສົງການເດີນທາງ (ໄປປະຕິບັດໜ້າທີ່ທາງການ, ໄປວຽກໂຄງການ, ໄປທໍາການຜະລິດ, ໄປຂົນສົ່ງສິນຄ້າ-ສະບຽງອາຫານ, ພີ່ນ້ອງເຈັບເປັນ-ເສຍຊີວິດ, ໄປໂຮງໝໍ, ກັບຄືນພູມລໍາເນົາ ສໍາລັບຄົນຕ່າງແຂວງທີ່ຄ້າງຢູ່ນະຄອນຫຼວງ), ສະຖານທີ່ຈະເດີນທາງໄປ (ບ້ານ, ເມືອງ, ແຂວງ), ພາຫະນະທີ່ຈະນໍາໃຊ້ (ຍີ່ຫໍ້, ປະເພດ, ສີ ແລະ ເລກທະບຽນ);
2. ເອກະສານເພີ່ມເຕີມ: ສໍາເນົາບັດປະຈໍາຕົວ ຫຼື ປຶ້ມສໍາມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ຂໍ້ຕົກລົງແຕ່ງຕັ້ງໄປວຽກທາງການ, ສໍາເນົາໃບທະບຽນລົດ, ສໍາລັບຄົນຕ່າງປະເທດ ຕ້ອງມີເອກະສານຢັ້ງຢືນການອະນຸຍາດເຂົ້າມາ ສປປ ລາວ, ສໍາເນົາ PASSPORT, ໃບຢັ້ງຢືນການຈໍາກັດບໍລິເວນຄົບ 14 ວັນ, ໃບຢັ້ງຢືນຜົນກວດໂຄວິດ-19.

**V. ການຮັບເອກະສານຂໍອະນຸຍາດເດີນທາງ ເປີດທຸກວັນ ເວລາ 08:00-16:00 ໂມງ:**

1. ສໍາລັບປະຊາຊົນລາວ, ຄົນຕ່າງດ້າວ ແລະ ຊາວຕ່າງປະເທດ ແມ່ນໃຫ້ສົ່ງເອກະສານຂໍອະນຸຍາດ ຜ່ານທາງ WhatsApp: 020 9591 7490, 020 9285 3909. ເບີໂທສອບຖາມ: 020 9261 8918, 020 9657 3058, 020 5889 4533, 020 9857 6462.
2. ສໍາລັບພະນັກງານລັດຂັ້ນທ້ອງຖິ່ນ, ພະນັກງານວິສາຫະກິດ ແລະ ນັກບວດ ໃຫ້ສົ່ງເອກະສານຂໍອະນຸຍາດ ຜ່ານທາງ WhatsApp: 020 23222592, 020 95144492, ເບີໂທສອບຖາມ: 020 29288997, 020 95353453, 020 29804250.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຮອງເຈົ້າຄອງນະຄອນຫຼວງວຽງຈັນ**
**ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ**
**ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ນວ**

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

**ພູວົງ ວົງຄໍາຊາວ**